ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 373/ຫສນຍ.ກລຂ

ນະຄອນຫລວງວຽງຈັນ, ວັນທີ: 15.3.2018

0630
16/3/18

# ແຈ້ງການ

ຮຽນ : - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.
- ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.
- ທ່ານ ລັດຖະມົນຕີກະຊວງສາທາລະນະສຸກ.
- ທ່ານ ລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.
- ທ່ານ ເຈົ້າແຂວງຫຼວງນ້ຳທາ.

ເລື່ອງ : ທິດຊີ້ນຳກ່ຽວກັບການຈັດຕັ້ງປະຕິບັດວຽກຮ່ວມທຶນ ລະຫວ່າງພາກລັດ ( ກະຊວງການເງິນ ). ແລະ ພາກເອກະຊົນ ( ບໍລິສັດ ທີແຊັດ ໂອຊີດີ ລາວ-ຈຳກັດ ) ໃນການສ້າງຕັ້ງບໍລິສັດລາວສາກົນ ໂອຊີດີ ຈຳກັດ ເພື່ອສ້າງສາງຄັງນຖ່າຍສິນຄ້າ ຢູ່ດ່ານພາສີສາກົນບໍ່ເຕັນ, ແຂວງຫຼວງນ້ຳທາ.

- ອີງຕາມເອກະສານລາຍງານ ສະບັບເລກທີ 4089/ກງ, ລົງວັນທີ 23 ພະຈິກ 2017 ຂອງກະຊວງການເງິນ.
- ອີງຕາມເອກະສານລາຍງານຜົນກອງປະຊຸມປຶກສາຫາລື ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໂດຍການເປັນປະທານຂອງທ່ານສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 6 ກຸມພາ 2018, ສະບັບເລກທີ 147/ຫສນຍ.ກຄສ, ລົງວັນທີ 14 ກຸມພາ 2018 ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.
- ອີງຕາມທິດຊີ້ນຳ ແລະ ຕົກລົງ ຂອງກອງປະຊຸມນາຍົກ- ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 14 ມີນາ 2018.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ແລະ ການຕົກລົງຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ກ່ຽວກັບບັນຫາດັ່ງກ່າວ ມາຍັງທ່ານຊາບ ດັ່ງນີ້ :

ເຫັນດີໃຫ້ກະຊວງການເງິນ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງສາທາລະນະສຸກ ແຕ່ງພະນັກງານ ແລະ ເຈົ້າໜ້າທີ່ໄປປະຈຳການຢູ່ດ່ານພາສີສາກົນບໍ່ເຕັນ ແຂວງຫຼວງນ້ຳທາ ຕາມການສະເໜີ ຂອງກະຊວງການເງິນ, ແຕ່ມອບໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະລະສຸກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ແຂວງຫຼວງນ້ຳທາ ແລະ ພາກສ່ວນກ່ຽວຂ້ອງ

ປົກສາຫາລືກັນ ເພື່ອສ້າງກົນໄກການຄຸ້ມຄອງ ແລະ ການບໍລິການ ຢູ່ເຂດດ່ານດັ່ງກ່າວ ໃຫ້ຮັດກຸມ, ວ່ອງໄວ, ໂລ່ງລ່ຽນ ແລະ ບໍ່ສ້າງຄ່າສິ້ນເປືອງເພີ່ມໃຫ້ຜູ້ປະກອບການ.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມຈິດໃຈຊີ້ນຳທີ່ໄດ້ກ່າວມາຂ້າງເທິງດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ນາຍົກ-ຮອງນາຍົກ | 05 ສະບັບ. |
| - ຫ້ອງວ່າການສູນກາງພັກ | 01 ສະບັບ. |
| - ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ |
| - ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ |
| - ລັດຖະມົນປະຈຳ ສນຍ ທ່ານລະ | 01 ສະບັບ. |
| - ຄະນະຫ້ອງວ່າການ ສນຍ | 06 ສະບັບ. |
| - ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ. |
| - ກົມເລຂາ, ຫສນຍ | 01 ສະບັບ. |
| - ກົມກວດກາ ແລະ ປະເມີນຜົນ, ຫສນຍ | 01 ສະບັບ |
| - ເກັບມ້ຽນ | 01 ສະບັບ |